## ຂໍ້ແນະນຳ

# "ການຢ້ຽມຢາມກຸ່ມບ້ານ"

**<u>ສະຖານທີ່:</u>**

- ກຸ່ມບ້ານ ແລະ ບ້ານທີ່ມີການຈັດຕັ້ງປະຕິບັດໂຄງການຍ່ອຍຢູ່

**<u>ຜູ້ເຂົ້າຮ່ວມ ແລະ ພາກສ່ວນພາຍນອກທີ່ຖືກເຊີນ:</u>**

- ***ຜູ້ອຳນວຍຄວາມສະດວກ:***

  ພະນັກງານ ທລຍ ຂັ້ນເມືອງ, ຕາງໜ້າຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນເມືອງ ແລະ ຜູ້ປະສານງານກຸ່ມບ້ານ.

- ***ຜູ້ມາຢ້ຽມຢາມ:***

  ທີມງານຂັ້ນກຸ່ມບ້ານ (ທີມງານການເງິນ, ຈັດຊື້ ແລະ ຜູ້ປະສານງາກຸ່ມບ້ານ), ອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນຈາກບ້ານທີ່ໄດ້ຮັບໂຄງການຍ່ອຍຈາກ ທລຍ ເປັນຄັ້ງທຳອິດ.

- ***ເຈົ້າພາບ:***

  *ຕົວແທນກຸ່ມບ້ານ, ທີມງານຂັ້ນກຸ່ມບ້ານ (ທີມງານການເງິນ ແລະ ທີມງານຈັດຊື້, ຜູ້ປະສານງານກຸ່ມບ້ານ), ຕົວແທນບ້ານ ແລະ ທີມງານຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງຂັ້ນບ້ານ ຊຶ່ງເປັນບ້ານທີ່ປະສົບຜົນສຳເລັດໃນການຈັດດຕັ້ງປະຕິບັດໂຄງການຍ່ອຍໃນຮອບວຽນທີ່ແລ້ວ; ຄະນະກຳມະການ ກສກ ຂັ້ນກຸ່ມບ້ານ ແລະ ອຳນາດການປົກຄອງບ້ານ.*

**<u>ຈຸດປະສົງ:</u>**

ເພື່ອສະແດງໃຫ້ຊຸມຊົນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການ ທລຍ ເປັນຄັ້ງທຳອິດ ( ຫລື ຊຸມຊົນທີ່ມີປະສົບການໃນການພົບພໍ້ກັບບັນຫາຫຍຸ້ງຍາກ ຫລື ຕ້ອງໄດ້ເລື່ອນການຈັດຕັ້ງປະຕິບັດໂຄງການຍ່ອຍ) ເຫັນເຖິງ ຮູບແບບການຈັດຕັ້ງປະຕິບັດໂຄງການຍ່ອຍອື່ນໆທີ່ດີທີ່ສຸດ ເພື່ອຊ່ວຍໃຫ້ເຂົາເຈົ້າສາມາດໃຈ້ແຍກ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງນຳໃຊ້ໂຄງການຍ່ອຍທີ່ດີໃຫ້ໄດ້ດີເຊັ່ນດຽວກັນ.

**<u>ຄາດຄະເນຜົນໄດ້ຮັບ</u>**:

- ແລກປ່ຽນປະສົບການໂຕຈິງທີ່ດີທີ່ສຸດ
- ບົດຮຽນທີ່ຖອດຖອນໄດ້ຈາກຜົນສຳເລັດໃນການແກ້ໄຂບັນຫາຕ່າງໆ

**<u>ກິດຈະກຳ ແລະ ຄວາມຮັບຜິດຊອບ</u>**

- ຢ້ຽມຢາມໂຄງການຍ່ອຍ
- ປະຊຸມຮ່ວມກັບທີມງານຂັ້ນກຸ່ມບ້ານ ແລະ ທີມງານຂັ້ນບ້ານ
- ທົບທວນຄືນ ບົດລາຍງານ ແລະ ຂໍ້ມູນການບັນທຶກເອກະສານດ້ານການເງິນ

<u>**ໝາຍເຫດ:**</u>

- ການຢ້ຽມຢາມລະຫວ່າງກຸ່ມບ້ານຈະຈັດຂຶ້ນໃນເວລາດຽວກັນກັບການຈັດກອງປະຊຸມສະຫລຸບງວດງົບປະມານໂຄງການຍ່ອຍຂັ້ນກຸ່ມບ້ານ,
- ລາຍລະອຽດອື່ນໆກ່ຽວກັບການຢ້ຽມຢາມດັ່ງກ່າວ, ຈຸດປະສົງ ແລະ ແນວທາງໃນການຕິດຕາມແມ່ນສາມາດເບິ່ງໄດ້ໃນບົດຂອງວຽກງານເສີມສ້າງຄວາມເຂັ້ມແຂງ ຊຶ່ງໄດ້ຄັດຕິດມາພ້ອມນີ້.

<u>**ກຳນົດເວລາ:**</u>

1 ຫາ 2 ມື້

**ຂໍ້ແນະນຳ**

# “ວິທີການຈັດການຢ້ຽມຢາມກຸ່ມບ້ານ”

## ການໄປຢ້ຽມຢາມກຸ່ມບ້ານອື່ນຂອງທີມງານກຸ່ມບ້ານ

ນຶ່ງໃນປະເພດຕິດຕາມປະເມີນຜົນ ທີ່ໄດ້ຮັບຜົນທີ່ສຸດຂອງການຕິດຕາມ ແມ່ນການຈັດການຕິດຕາມໂດຍຊຸມຊົນເອງ, ການຈັດໃນລັກສະນະນີ້ ແມ່ນສະໜັບສະໜູນໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ເຖິງຂະບວນການຂອງແຜນງານ ແລະ ເພີ່ມຄວາມເຂົ້າໃຈຂອງພາບລວມ ຂອງການຈັດຕັ້ງປະຕິບັດໃຫ້ຜູ້ຮ່ວມຂະບວນການຈັດຕັ້ງປະຕິບັດ. ສິ່ງໄດ້ຮັບ ທີ່ມີປະໂຫຍດທີ່ສຳຄັນສຳລັບຜູ້ໃຫ້ທຶນ ແລະ ຜູ້ຈັດຕັ້ງປະຕິບັດແຜນງານອາດແຕກຕ່າງ ຈາກສິ່ງທີ່ໄດ້ຮັບ ທີ່ມີປະໂຫຍດຂອງຊຸມຊົນ. ການຕິດຕາມການຈັດຕັ້ງປະຕິບັດແບບມີສ່ວນຮ່ວມ ຈາກຊຸມຊົນແມ່ນການໃຫ້ໂອກາດຊຸມຊົນ ໃນການທົບທວນຂະບວນການຈັດຕັ້ງປະຕິບັດແບບວິເຄາະ ແລະ ຖອດຖອນເປັນບົດຮຽນ ໃຫ້ແກ່ຂະບວນການຈັດຕັ້ງປະຕິບັດ ຂອງເຂົາເຈົ້າເອງ.

ພາຍໃຕ້ກິດຈະກຳແລກປ່ຽນບົດຮຽນໃນລັກສະນະນີ້, ກຸ່ມຕົວແທນຈາກຜູ້ປະສານງານກຸ່ມບ້ານຈະໄປຢ້ຽມຢາມກຸ່ມບ້ານອື່ນ ຢູ່ພາຍໃນແຂວງຂອງພວກເຂົາເຈົ້າ ເພື່ອຕິດຕາມຂະບວນການຈັດກອງປະຊຸມສະຫລຸບງວດ ຂອງທີມງານກຸ່ມບ້ານ ແລະ ເພື່ອເປັນຜູ້ຢັ້ງຢືນໃນການນຳໃຊ້ງົບປະມານ, ເພື່ອຕິດຕາມການໃຊ້ຈ່າຍງົບປະມານ ເຂົ້າໃນການຈັດຊື້ອຸປະກອນ ແລະ ເຄື່ອງຮັບໃຊ້ຕ່າງໆ ແລະ /ຫລື ຕິດຕາມໜ້າວຽກທີ່ຈັດຕັ້ງປະຕິບັດໂດຍບຸກຄົນທີສາມ ຫລື ຜູ້ຮັບເໝົາ ແລະ ເພື່ອ “ກວດສອບ” ປື້ມບັນຊີຂອງທີມງານກຸ່ມບ້ານ.

- **ການລາຍງານ**

ການຕິດຕາມຈະໄດ້ຈັດຂຶ້ນ 1 ຄັ້ງຕໍ່ປີ ໂດຍທີມງານ ຂອງກຸ່ມບ້ານ ຊຶ່ງຫລັງຈາກກັບຈາກການຕິດຕາມການຈັດຕັ້ງປະຕິບັດຂອງກຸ່ມບ້ານອື່ນແລ້ວ ເຂົາເຈົ້າຈະສົ່ງແບບຟອມການໄປຢ້ຽມຢາມກຸ່ມບ້ານອື່ນຂອງທີມງານກຸ່ມບ້ານ (CKM) ໃຫ້ພະນັກງານ ທລຍ ຂັ້ນເມືອງ, ພະນັກງານຂັ້ນເມືອງຈະເປັນຜູ້ຮວບຮວມແບບຟອມ ແລະ ສົ່ງໃຫ້ທີມງານ ທລຍ ຂັ້ນແຂວງ ຫລັງຈາກທີ່ໄດ້ກວດກາຄວາມຖືກຕ້ອງ ຂອງຂໍ້ມູນ ແລະ ກວດກາຂໍ້ມູນຄືນ ກັບຜູ້ເຂົ້າຮ່ວມກອງປະຊຸມໃນກໍລະນີທີ່ຂໍ້ມູນຍັງບໍ່ທັນແນ່ນອນ. ພະນັກງານຂັ້ນແຂວງຈະເປັນຜູ້ຮັບຜິດຊອບ ໃນການປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນ ແລະ ສົ່ງຂໍ້ມູນເອເລັກໂທນິກຟາຍ ໃຫ້ພະນັກງານຕິດຕາມປະເມີນຜົນຂັ້ນສູນກາງພາຍໃນນຶ່ງອາທິດ ຫລັງຈາກທີ່ສຳເລັດກິດຈະກຳໃນທຸກໆປີ. ພະນັກງານຂັ້ນແຂວງຍັງເປັນຜູ້ຮັບຜິດຊອບໃນການເຮັດບົດລາຍງານທີ່ປະກອບດ້ວຍການສັງລວມປະສົບການ ແລະ ບົດຮຽນທີ່ຖອດຖອນໄດ້ຕາມແບບຟອມທີ່ໄດ້ຮັບຈາກທີມງານເມືອງແລ້ວສົ່ງໃຫ້ຫ້ອງການ ທລຍ ຂັ້ນສູນ ກາງພາຍໃນນຶ່ງອາທິດຫລັງຈາກສຳເລັດການປ້ອນຂໍ້ມູນ.

ຫ້ອງການຂັ້ນສູນກາງຮັບຜິດຊອບໃນການບຳລຸງຮັກສາ ແລະ ປັບປຸງຂໍ້ມູນຢູ່ໃນຖານຂໍ້ມູນແມ່ ແລະ ຕິດຕາມຂໍ້ມູນທີ່ຂາດ ແລະ ບໍ່ຖືກຕ້ອງກັບພະນັກງານຂັ້ນແຂວງ. ຫ້ອງການຂັ້ນສູນກາງຍັງມີໜ້າ

ທີ່ຮັບຜິດຊອບສັງລວມຂໍ້ມູນການໄປຢ້ຽມຢາມກຸ່ມບ້ານອື່ນ ຂອງທີມງານກຸ່ມບ້ານຈາກຂໍ້ມູນທີ່ໄດ້ຈາກລະບົບຖານຂໍ້ມູນ ແລະ ຈາກບົດລາຍງານ ທີ່ພະນັກງານຂັ້ນແຂວງສົ່ງໃຫ້ສັງລວມເຂົ້າໃນບົດລາຍງານປະ ຈຳປີ.

ການສັງລວມແມ່ນກະກຽມໂດຍທີມງານ ຕິດຕາມ-ປະເມີນຜົນ ແລະ ລາຍງານຢູ່ໃນບົດລາຍງານປະຈຳປີ ໂດຍອີງໃສ່ບົດລາຍງານທີ່ພະນັກງານຂັ້ນແຂວງເປັນຜູ້ກະກຽມສົ່ງໃຫ້.

ໜ່ວຍງານພັດທະນາຊຸມຊົນ ຂອງຫ້ອງການ ທລຍ ຂັ້ນສູນກາງ ຈະເປັນຜູ້ຮັບຜິດຊອບໃນການຕິດຕາມຂະບວນການຈັດຕັ້ງປະຕິບັດຕົວຈິງ ຢູ່ໃນທຸກໆເມືອງ ແລະ ຕ້ອງໃຫ້ແນ່ໃຈວ່າຈຳນວນຜູ້ເຂົ້າຮ່ວມໃນການໄປຖອດຖອນບົດຮຽນນັ້ນ ມີຄວາມເໝາະສົມ. ດ້ວຍເຫດນັ້ນ, ໜ່ວຍງານດັ່ງກ່າວຈະຕ້ອງໄດ້ເຮັດການສຸ່ມຕົວຢ່າງກວດກາເພື່ອໃຫ້ການຊີ້ນຳ (1 ຄັ້ງຕໍ່ປີ ໃນ 1 ແຂວງ) ເພື່ອເຂົ້າຮ່ວມການໄປຢ້ຽມຢາມກຸ່ມບ້ານອື່ນຂອງທີມງານກຸ່ມບ້ານ.

- **ການຄັດເລືອກເປົ້າໝາຍເພື່ອໄປຖອດຖອນບົດຮຽນ ແລະ ຕິດຕາມການຈັດຕັ້ງປະຕິບັດ.**

*ການຄັດເລືອກກຸ່ມບ້ານ.*

ໃນແຕ່ລະປີ ທຸກໆກຸ່ມບ້ານທີ່ນອນຢູ່ໃນເມືອງທີ່ ທລຍ ຈັດຕັ້ງປະຕິບັດຢູ່ຈະມີການຄັດເລືອກຕາມເງື່ອນໄຂຕ່າງໆ ເພື່ອຈັດປະເພດ*ລະບົບການໃຫ້ລາງວັນແກ່ທີມງານກຸ່ມບ້ານ.* ເງື່ອນໄຂຕ່າງໆເຫລົ່ານີ້ ຈະເປັນຕົວວັດແທກການຈັດຕັ້ງປະຕິບັດທັງໝົດຂອງທີມງານກຸ່ມບ້ານ ວ່າໄປຕາມຫລັກການ ແລະ ກົດລະບຽບຂອງ ທລຍ ຫລື ບໍ່, ແລະ ຈະນຳໃຊ້ເປັນຕົວກຳໜົດທີມງານກຸ່ມບ້ານ ທີ່ມີຄວາມເຂັ້ມແຂງເປັນກຸ່ມບ້ານ " ເຈົ້າພາບ " ແລະ ກຸ່ມບ້ານທີ່ມີຄວາມເຂັ້ມແຂງນ້ອຍກ່ວາຈະເປັນກຸ່ມບ້ານ " ໄປຢ້ຽມຢາມ " ຢູ່ພາຍໃນເມືອງ : ກຸ່ມບ້ານທີ່ໄດ້ຮັບຄະແນນຫລາຍທີ່ສຸດຈະຖືກລະບຸເປັນກຸ່ມບ້ານທີ່ມີຄວາມເຂັ້ມແຂງ ແລະ ຖືເປັນກຸ່ມບ້ານເຈົ້າພາບ ເພື່ອເຊື້ອເຊີນຄະນະຜູ້ແທນຈາກກຸ່ມບ້ານອື່ນ ເຂົ້າຮ່ວມສະແດງຄວາມຄິດເຫັນໃນຂະບວນການຈັດຕັ້ງປະຕິບັດຢູ່ໃນກອງປະຊຸມສະຫລຸບງວດ. 3 ກຸ່ມບ້ານທີ່ໄດ້ຄະແນນຕ່ຳສຸດ ຈະຖືກຄັດເລືອກເພື່ອເປັນທີມງານໄປຢ້ຽມຢາມ ເພື່ອສັງເກດຂະບວນການຈັດກອງປະຊຸມສະຫລຸບງວດຢູ່ໃນກຸ່ມບ້ານເຈົ້າພາບ. ການຈັດລຳດັບ ຂອງທີມງານກຸ່ມບ້ານຈະໄດ້ເຮັດຢູ່ໃນທຸກໆປີ ເພື່ອສະທ້ອນໃຫ້ເຫັນຄວາມເຂັ້ມແຂງຂອງ ແຕ່ລະກຸ່ມໃນແຕ່ລະປີ.

***ພາກສ່ວນເຂົ້າຮ່ວມຂອງທີມງານກຸ່ມບ້ານທີ່ຈະໄປຢ້ຽມຢາມ ແລະ ທີມງານກຸ່ມບ້ານເຈົ້າ ພາບ.***

ທີມງານກຸ່ມບ້ານ "ໄປຢ້ຽມຢາມ" ແລະ "ເຈົ້າພາບ" ປະກອບດ້ວຍຕົວແທນຈາກ:

- ຜູ້ປະສານງານກຸ່ມບ້ານ;
- ຕົວແທນກຸ່ມບ້ານ;
- ທີມງານຈັດຊື້-ຈັດຈ້າງ ຂັ້ນກຸ່ມບ້ານ;
- ທີມງານຈັດຕັ້ງປະຕິບັດ ແລະ ປົກປັກຮັກສາ ຂັ້ນກຸ່ມບ້ານ; ແລະ
- ອື່ນໆ: __________

ການຄັດເລືອກທີມງານ ສາມາດເຮັດໄດ້ ໂດຍອີງໃສ່ຄວາມສະໝັກໃຈເປັນພື້ນຖານ ຫລື ໂດຍການແຕ່ງຕັ້ງ.

ທີມງານກຸ່ມບ້ານເຈົ້າພາບ ຍັງຈະຕ້ອງເປັນຜູ້ຮັບຜິດຊອບໃນການແຈ້ງ ແລະ ໃຫ້ການຮ່ວມມືກັບທີມງານກຸ່ມບ້ານ ທີ່ຈະມາຢ້ຽມຢາມເຖິງແຜນການເດີນທາງ, ວັນເວລາຈັດກອງປະຊຸມ, ສະຖານທີ່ ແລະ ເປັນຜູ້ຫ້າງຫາກະກຽມອຸປະກອນຕ່າງໆ, ແລະ ອື່ນໆ.

**ຮູບພາບສະແດງໃຫ້ເຫັນການໄປຢ້ຽມຢາມກຸ່ມບ້ານອື່ນຂອງທີມງານກຸ່ມບ້ານໃນແຕ່ລະເມືອງ**




ຢູ່ໃນແຜນວາດຂ້າງເທິງສະແດງໃຫ້ເຫັນວ່າ ກໍລະນີກຸ່ມບ້ານທີ 2 ເປັນກຸ່ມບ້ານທີ່ໄດ້ຮັບຄະແນນສູງສຸດ “ກຸ່ມບ້ານທີ່ມີຄວາມເຂັ້ມແຂງ” ຢູ່ໃນເມືອງໃນປີໃດນຶ່ງ, ດັ່ງນັ້ນ ກຸ່ມບ້ານດັ່ງກ່າວຈະເປັນ ກຸ່ມບ້ານ “ເຈົ້າພາບ”. ກຸ່ມບ້ານ 4, 5 ແລະ 6 ເປັນກຸ່ມບ້ານ “ໄປຢ້ຽມຢາມ” ທີ່ໄດ້ຮັບຄະແນນນ້ອຍທີ່ສຸດຢູ່ໃນເມືອງຢູ່ໃນປີດັ່ງກ່າວ.

***ຜົນກັບທາງຊຸມຊົນ***

ຫລັງຈາກສຳເລັດການຕິດຕາມ ການໄປຢ້ຽມຢາມກຸ່ມບ້ານອື່ນ, ຕົວແທນຂອງກຸ່ມບ້ານຕ້ອງໄດ້ ຕື່ມແບບຟອມການໄປຢ້ຽມຢາມກຸ່ມບ້ານອື່ນ ຂອງທີມງານກຸ່ມບ້ານ ສົ່ງໃຫ້ຫ້ອງການເມືອງ ໂດຍມີເນື້ອໃນທີ່ສະແດງເຖິງບົດຮຽນທີ່ຖອດຖອນໄດ້ ຈາກການໄປຢ້ຽມຢາມ. ສິ່ງທີ່ສັງເກດເຫັນຈາກການໄປຢ້ຽມ ຢາມ ແລະ ບົດຮຽນທີ່ຖອດຖອນໄດ້ ຈະຕ້ອງໄດ້ນຳມາປຶກສາຫາລືກັນຢູ່ໃນກອງປະຊຸມຂອງກຸ່ມບ້ານຂອງເຂົາເຈົ້າ.